WISCONSIN DEPARTMENT OF HEALTH SERVICES
Division of Medicaid Services
F-16038L (08/2023)

**SANC**

# ແຈ້ງການການຮັບຟັງການພິຈາລະນາຄະດີການຂາດຄຸນນະສົມບັດທາງການປົກຄອງຂອງ FOODSHARE
## (FOODSHARE ADMINISTRATIVE DISQUALIFICATION HEARING NOTICE)

| ຊື່ – ສະມາຊິກ | | | ວັນທີທີ່ສົ່ງ |
|---|---|---|---|
| ໝາຍເລກປະຈຳຕົວ CARES | ເລກທີເລື່ອງ | | |
| ທີ່ຢູ່ຖະໜົນ | | | ໂທລະສັບ |
| ເມືອງ | | ລັດ | ລະຫັດ Zip |

Department of Health Services (ກົມບໍລິການສຸຂະພາບ) ຂອງລັດ Wisconsin ເຊື່ອວ່າທ່ານຝ່າຝືນກົດລະບຽບຂອງ Wisconsin FoodShare ໂດຍເຈດຕະນາ. ລາຍລະອຽດກ່ຽວກັບບັນຫາດັ່ງກ່າວແມ່ນນຳສະເໜີໄວ້ໃນໜ້າທີ 2. ການພິຈາລະນາຄະດີ, ຊຶ່ງເອີ້ນວ່າການໄຕ່ສວນການຕັດສິນທາງການປົກຄອງ ໄດ້ຮັບ ການກຳນົດໃຫ້ກວດສອບຂໍ້ເທັດຈິງ ແລະ ພິຈາລະນາວ່າທ່ານຝ່າຝືນກົດລະບຽບຂອງ ໂປຣແກຣມນີ້ໂດຍເຈດຕະນາຫຼືບໍ່.

**ການພິຈາລະນາຄະດຣແມ່ນກຳນົດໄວ້ໃນວັນທີ:**

| ວັນທີ | ເວລາ |
|---|---|
| ສະຖານທີ່/ທາງໂທລະສັບ | |

**ຂ້າພະເຈົ້າຈຳເປັນຕ້ອງເຂົ້າຮ່ວມການພິຈາລະນາຄະດີນີ້ບໍ່?**

ໂດຍທົ່ວໄປ ການພິຈາລະນາຄະດີແມ່ນຈະຈັດຂຶ້ນໂດຍຜ່ານທາງໂທລະສັບ.
ທ່ານຈະໄດ້ຮັບໂທລະສັບຈາກເຈົ້າໜ້າທີ່ພິຈາລະນາຄະດີຈາກ Division of Hearings and Appeals (ພະແນກພິຈາລະນາຄະດີ ແລະ ການຂໍອຸທອນ) ຕາມວັນ ແລະ ເວລາດັ່ງທີ່ລະບຸໄວ້ໃນເບື້ອງຕົ້ນ.

ຖ້າຫາກວ່າໝາຍເລກໂທລະສັບທີ່ທ່ານໄດ້ລະບຸໄວ້ບໍ່ຖືກຕ້ອງ, ທ່ານຕ້ອງຕິດຕໍ່ Division of Hearings and Appeals (ພະແນກພິຈາລະນາຄະດີ ແລະ ການຂໍອຸທອນ) ເພື່ອອັບເດດໝາຍເລກໂທລະສັບຂອງທ່ານ. ຖ້າຫາກວ່າ Division of Hearings and Appeals (ພະແນກພິຈາລະນາຄະດີ ແລະ ການຂໍອຸທອນ) ຕິດຕໍ່ຫາທ່ານບໍ່ໄດ້, ຈະສົ່ງຜົນເຮັດໃຫ້ເຈົ້າໜ້າທີ່ພິຈາລະນາຄະດີດຳເນີນການພິຈາລະນາຈາກຂໍ້ມູນທີ່ມີຢູ່ແລ້ວເທົ່ານັ້ນ.

**ຈະເກີດຫຍັງຂຶ້ນຖ້າຫາກວ່າຂ້າພະເຈົ້າບໍ່ສາມາດໂທລະສັບເພື່ອການພິຈາລະນາຄະດີໃນຄັ້ງນີ້ໄດ້?**

ທ່ານສາມາດຮ້ອງຂໍໃຫ້ມີການພິຈາລະນາຄະດີໃໝ່ໄດ້. ຖ້າຫາກວ່າ ພາຍໃນໄລຍະເວລາ 10 ວັນນັບຈາກວັນທີການພິຈາລະນາຄະດີ ທ່ານຕ້ອງ ສະແດງເຫດຜົນທີ່ດີໃນການຂໍເລື່ອນກຳນົດເວລາຄືນໃໝ່. ເພື່ອຮ້ອງຂໍການນັດວັນພິຈາລະນາຄະດີຄືນໃໝ່ ໃຫ້ຕິດຕໍ່:

Division of Hearings and Appeals
P.O. Box 7875
Madison, WI 53707-7875

DHAMail@wisconsin.gov
608-266-7709

ການແຈກຢາຍ: ສະມາຊິກ – ຕົ້ນເດີມ; ສຳນວນຄະດີ – ສຳເນົາ

**ຂໍ້ຫາ ແລະ ການລະເມີດໃດ?**

**ພວກຂ້າພະເຈົ້າເຊື່ອວ່າ ທ່ານໄດ້ລະເມີດກົດລະບຽບຂອງ Wisconsin FoodShare ໂດຍເຈດຕະນາ ເນື່ອງຈາກວ່າທ່ານ:**

- ☐ ກ່າວເຖິງຂໍ້ຄວາມທີ່ເປັນເທັດ ຫຼື ເຮັດໃຫ້ເກີດຄວາມເຂົ້າໃຈຜິດ.
- ☐ ບິດເບືອນຄວາມເປັນຈິງ ຫຼື ບິດບັງຂໍ້ເທັດຈິງ.
- ☐ ການກະທຳທີ່ເປັນການລະເມີດ Food Stamp Act (ກົດໝາຍວ່າດ້ວຍສະແຕັມແລກອາຫານ), ລະບຽບການກ່ຽວກັບ Food Stamp Program (ໂປຣແກຣມສະແຕັມແລກອາຫານ), ຫຼື ກົດໝາຍອື່ນໃດໜຶ່ງຂອງລັດ Wisconsin ເພື່ອຈຸດປະສົງໃນການນຳໃຊ້, ນຳສະເໜີດ ການມອບໂອນ, ການໄດ້ມາດ ການໄດ້ຮັບ, ການຄອບຄອງ, ຫຼື ການຄ້າສິດຜົນປະໂຫຍດຂອງ FoodShare ຫຼື ບັດ QUEST.
- ☐ ໄດ້ຮັບສິດຜົນປະໂຫຍດຊ້ຳຊ້ອນບົນພື້ນຖານການສະແດງຂໍ້ຄວາມທີ່ເປັນເທັດ ຫຼື ການ ບິດເບືອນຄວາມເປັນຈິງຂອງທ່ານ.
- ☐ ຖືກສານຕັດສິນວ່າໃຊ້ ຫຼື ຮັບ FoodShare ໃນທຸລະກຳທີ່ກ່ຽວຂ້ອງກັບການຄ້າຂາຍ ຢາເສບຕິດ, ອາວຸດປືນ, ລູກປືນ ແລະ ວັດຖຸລະເບີດ.
- ☐ ຖືກສານຕັດສິນໃນຂໍ້ຫາຄ້າຂາຍສິດຜົນປະໂຫຍດ FoodShare ທີ່ມີມູນຄ່າຫຼາຍ ກ່ວາ 500 ໂດລາສະຫະລັດ.

**ການລະເມີດ ແລະ ຫຼັກຖານ**

ສະຫຼຸບການລະເມີດ:

---

ສະຫຼຸບຫຼັກຖານ:

---

ທ່ານໄດ້ຮັບສິດຜົນປະໂຫຍດ FoodShare ທີ່ທ່ານບໍ່ມີສິດໄດ້ຮັບໃນວັນທີຄືດັ່ງຕໍ່ໄປ ນີ້: ນັບຈາກວັນທີ __________ ເຖິງ ວັນທີ__________.

ຈຳນວນສິດຜົນປະໂຫຍດທັງໝົດທີ່ທ່ານໄດ້ຮັບ ແຕ່ບໍ່ມີຄຸນນະສົມບັດເປັນຈຳນວນ: $__________.

**ທ່ານມີສິດໄດ້ຮັບການພິຈາລະນາຄະດີການຕັດສິດທາງການປົກຄອງ ກ່ອນທີ່ລັດ Wisconsin ຈະຕັດສິດທ່ານຈາກການຮັບສິດຜົນປະໂຫຍດຈາກ FoodShare.**

**ຂ້າພະເຈົ້າໄດ້ຮັບສິດທິຫຍັງແດ່ໃນການພິຈາລະນາຄະດີນີ້?**

**ທ່ານໄດ້ຮັບສິດໃນການ:**

- ຂໍເບິ່ງຫຼັກຖານທີ່ຈະນຳໃຊ້ໃນການພິຈາລະນາຄະດີທັງ ກ່ອນ ແລະ ໃນລະຫວ່າງ ການ ພິຈາລະນາຄະດີ, ແລະ ຂໍຮັບສຳເນົາສ່ວນທີ່ກ່ຽວຂ້ອງກັບສຳນວນຄະດີຂອງທ່ານໄດ້ ໂດຍບໍ່ເສຍຄ່າຕາມຄຳຮ້ອງຂໍຂອງທ່ານ.
- ສະເໜີຄະດີຂອງທ່ານເອງ ຫຼື ໃຫ້ຜູ້ອື່ນ ເຊັ່ນວ່າ: ທະນາຍຄວາມ, ໝູ່ເພື່ອນ, ຍາດຕິພີ່ ນ້ອງ ຫຼື ເຈົ້າໜ້າທີ່ຊຸມຊົນນຳສະເໜີຄະດີສຳລັບທ່ານ. ອາດຈະມີການ ໃຫ້ບໍລິການດ້ານກົດໝາຍໂດຍບໍ່ເສຍຄ່າສຳລັບທ່ານ.
  ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການບໍລິການທາງດ້ານກົດໝາຍໂດຍບໍ່ເສຍຄ່າ, ທ່ານສາ ມາດຕິດຕໍ່:

| Legal Action of Wisconsin | ຫຼື | Wisconsin Judicare, Inc. |
|---|---|---|
| www.legalaction.org | | www.judicare.org |
| 1-855-947-2529 | | 1-800-472-1638 |

- ຮ້ອງຂໍໃຫ້ເລື່ອນການພິຈາລະນາຄະດີຂອງທ່ານອອກໄປເປັນເວລາສູງສຸດ 30 ວັນ ຖ້າ ຫາກວ່າທ່ານຕ້ອງການເວລາດົນກ່ວານີ້ໃນການກະກຽມຄະດີຂອງທ່ານ.
    - ຖ້າຫາກວ່າ ການພິຈາລະນາຄະດີຂອງທ່ານແມ່ນຈະຈັດຂຶ້ນພາຍໃນ 10 ວັນ, ທ່ານຕ້ອງ ໃຫ້ໂທຫາຜົນທີ່ດີແກ່ Division of Hearings and Appeals (ພະແນກພິຈາລະນາຄະດີ ແລະ ການຂໍອຸທອນ) ເພື່ອຂໍເລື່ອນກຳນົດເວລາຄືນໃໝ່.
- ນຳເອົາພະຍານຂອງທ່ານເອງເຂົ້າຮ່ວມ.
- ໂຕ້ແຍ້ງຄະດີຂອງທ່ານໄດ້ຢ່າງອິດສະຫຼະ.
- ຕັ້ງຄຳຖາມຕໍ່ກັບຫຼັກຖານ ຫຼື ຂໍ້ຄວາມໃດໜຶ່ງທີ່ໄດ້ກ່າວຫາຕໍ່ທ່ານ.
- ນຳເອົາຫຼັກຖານໃດໜຶ່ງເຂົ້າສູ່ການພິຈາລະນາຄະດີທີ່ສະໜັບສະໜູນໃຫ້ແກ່ຄະດີຂອງທ່ານ.
- ຈົ່ງມິດງຽບຕໍ່ກັບຂໍ້ກ່າວຫາ, ເນື່ອງຈາກສິ່ງທີ່ທ່ານກ່າວ ຫຼື ລົງນາມອາດຈະນຳໄປໃຊ້ກັບ ທ່ານໃນຊັ້ນສານ.
- ຂໍເອົາສຳເນົາຂັ້ນຕອນໃນການພິຈາລະນາຄະດີຈາກ Department of Health Services (ກົມບໍລິການສຸຂະພາບ) ຂອງລັດ Wisconsin ທີ່ໄດ້ເຜີຍແຜ່ຕາມ 7CFR § 273.16(e)(2)(v) ດ້ວຍການຕິດຕໍ່ຫາໜ່ວຍງານ.

ທ່ານ ຫຼື ຕົວແທນທີ່ໄດ້ຮັບອະນຸຍາດຂອງທ່ານສາມາດຂໍນັດໝາຍເພື່ອປຶກສາຫາລືກ່ຽວ ກັບຫຼັກຖານຕ່າງໆ ກ່ອນການພິຈາລະນາຄະດີຮ່ວມກັບຕົວ
ແທນທີ່ໄດ້ຮັບມອບໝາຍ ໃຫ້ດູແລຄະດີຄວາມຕາມລາຍການຄືດັ່ງລຸ່ມນີ້.

| ຕົວແທນໜ່ວຍງານ | ໂທລະສັບ |
|---|---|
| | |

**ຈະເກີດຫຍັງຂຶ້ນ ຖ້າຫາກ ຂ້າພະເຈົ້າຖືກຕັດສິນວ່າມີຄວາມຜິດ?**

ຖ້າຫາກວ່າ ເຈົ້າໜ້າທີ່ພິຈາລະນາຄະດີຕັດສິນວ່າ ທ່ານລະເມີດກົດລະບຽບຂອງໂປຣ ແກຣມໂດຍເຈດຕະນາ,
**ທ່ານຈະຖືກຕັດສິນອອກຈາກ Wisconsin FoodShare ເປັນເວລາ:**

☐ **ໜຶ່ງປີ** ເນື່ອງຈາກວ່າ ນີ້ເປັນການລະເມີດຄັ້ງທຳອິດຂອງທ່ານ.

☐ **ສອງປີ** ເນື່ອງຈາກວ່າ ນີ້ເປັນການລະເມີດຄັ້ງທີສອງຂອງທ່ານ.

☐ **ສອງປີ** ເນື່ອງຈາກ ນີ້ຈະເປັນການຕັດສິນຄັ້ງທຳອິດຂອງທ່ານໃນການຂັ້ນສານ ລັດ ຖະບານກາງ, ລັດ ຫຼື ທ້ອງຖິ່ນໃນຂໍ້ຫາການນຳໃຊ້ ຫຼື ຮັບສິດຜົນປະໂຫຍດໃນການ ເຮັດທຸລະກຳຂອງກ່ຽວຂ້ອງກັບການຊື້ຂາຍຢາເສບຕິດ.

☐ **10 ປີ** ເນື່ອງຈາກສິ່ງນີ້ຈະເປັນການລົງໂທດຕໍ່ການລະເມີດໂປຣແກຣມໂດຍເຈດ ຕະນາຄັ້ງທຳອິດ ຫຼື ຄັ້ງທີສອງຂອງທ່ານ ເນື່ອງຈາກການໄດ້ຮັບສິດຜົນປະໂຫຍດທີ່ຊ້ຳ ຊ້ອນກັນຈາກຂໍ້ມູນ ຫຼື ການເປັນຕົວແທນທີ່ເປັນສໍ້ໂກງຂອງທ່ານ.

☐ **ຢ່າງຖາວອນ** ເນື່ອງຈາກສິ່ງນີ້ເປັນການລົງໂທດການລະເມີດໂປຣແກຣມໂດຍ ເຈດຕະນາຄັ້ງທຳອິດຂອງທ່ານ ຊຶ່ງເປັນຜົນເນື່ອງມາຈາກການຕັດສິນໂດຍສານລັດຖະ ບານກາງ, ລັດ ຫຼື ທ້ອງຖິ່ນໃນຂໍ້ຫາການໃຊ້ ຫຼື ຮັບສິດຜົນປະໂຫຍດທີ່ກ່ຽວຂ້ອງກັບ ການຊື້ຂາຍອາວຸດປືນ, ລູກປືນ ຫຼື ວັດຖຸລະເບີດ.

☐ **ຢ່າງຖາວອນ** ເນື່ອງຈາກສິ່ງນີ້ເປັນການຕັດສິນຄັ້ງທີ່ສອງຂອງສານໃນຊັ້ນສານລັດ ຖະບານກາງ, ລັດ ຫຼື ທ້ອງຖິ່ນໃນຂໍ້ຫາການນຳໃຊ້ ຫຼື ຮັບສິດຜົນປະໂຫຍດໃນການ ເຮັດທຸລະກຳທີ່ກ່ຽວຂ້ອງກັບການຊື້ຂາຍຢາເສບຕິດ.

☐ **ຢ່າງຖາວອນ** ເນື່ອງຈາກສິ່ງນີ້ເປັນການຕັດສິນໃນຊັ້ນສານລັດຖະບານກາງ, ລັດ ຫຼື ທ້ອງຖິ່ນ ໃນຂໍ້ຫາການຮັບສິດຜົນປະໂຫຍດຈາກການຄ້າຂາຍສິດຜົນປະໂຫຍດເປັນ ຈຳນວນເງິນລວມກັນນັບຕັ້ງແຕ່ 500 ໂດລາສະຫະລັດຂຶ້ນໄປ.

☐ **ຢ່າງຖາວອນ** ເນື່ອງຈາກສິ່ງນີ້ເປັນການລະເມີດຄັ້ງທີສາມໃນຂໍ້ຫາໃດໜຶ່ງ ດັ່ງທີ່ ໄດ້ກ່າວມາຂ້າງເທິງ.

ການພິຈາລະນາຄະດີນີ້ **ບໍ່ໄດ້ປ້ອງກັນ** ທະນາຍຄວາມຂອງເມືອງຈາກການ
ຟ້ອງຮ້ອງທ່ານໃນຂໍ້ຫາການລະເມີດໂປຣແກຣມໂດຍເຈດຕະນາໃນ **ການດຳເນີນ ຄະດີທາງແພ່ງ ຫຼື ທາງອາຍາ** ຫຼື ຈາກການທີ່ໜ່ວຍງານຮຽກເກັບເງິນຄ່າຈ້າງເກີນ. ທ່ານ ແລະ ສະມາຊິກໃນຄອບຄົວທີ່ເຫຼືອຢູ່ຊຶ່ງທີອາຍຸ 18 ປີຂຶ້ນໄປໃນຊ່ວງເວລາການ ຊຳລະເງິນຫຼາຍເກີນໄປ ຈະຕ້ອງຮັບຜິດຊອບໃນການຊຳລະເງິນຄືນສິດຜົນປະໂຫຍດ ທີ່ບໍ່ມີສິດ.

## ຖະແຫຼງການບໍ່ເລືອກປະຕິບັດ

ເພື່ອສອດຄ່ອງກັບກົດຫມາຍວ່າດ້ວຍສິດທິພົນລະເຮືອນຂອງລັດຖະບານກາງແລະກະຊວງກະສິກໍາສະຫະລັດ (U.S. Department of Agriculture ຫຼື USDA) ລະບຽບການສິດທິພົນລະເຮືອນແລະນະໂຍບາຍ, USDA, ທຸລະກິດຂອງຕົນ, ຫ້ອງການ, ແລະພະນັກງານ, ແລະສະຖາບັນເຂົ້າຮ່ວມໃນການຫຼືການບໍລິຫານໂຄງການ USDA ແມ່ນຖືກຫ້າມຈາກທຸກໆການຈໍາແນກເລືອກປະຕິບັດໂດຍອີງໃສ່ເຊື້ອຊາດ, ສີຜິວ, ຊາດກໍາເນີດ, ເພດ, ສາດສະຫນາ, ຄວາມພິການ, ອາຍຸສູງສຸດ, ຄວາມເຊື່ອຖືທາງດ້ານການເມືອງ, ຫຼືຖືກແກ້ແຄ້ນຫຼືການໂຕ້ຕອບກ່ຽວກັບ ກິດຈະກໍາສິດທິພົນລະເຮືອນກ່ອນໃນໂຄງການ ຫຼືກິດຈະກໍາດໍາເນີນການ ຫຼືທີ່ໄດ້ຮັບການສະຫນັບສະຫນູນໂດຍ USDA.

ຜູ້ຄົນພິການທີ່ຮຽກຮ້ອງໃຫ້ມີວິທີການທາງເລືອກຂອງການສື່ສານເພື່ອຂໍ້ມູນຂອງໂຄງການ (ເຊັ່ນ: ພາສາ Braille, ຕົວພິມຂະຫນາດໃຫຍ່, ເທັບສຽງ, ພາສາມືອາເມຣິກາ, ແລະອື່ນໆ), ຄວນຈະຕິດຕໍ່ຫາອົງການ (ພາກລັດຫຼືຂອງທ້ອງຖິ່ນ) ບ່ອນທີ່ເຂົາເຈົ້ານໍາໃຊ້ຮຽກຮ້ອງຂໍຜົນປະໂຫຍດ. ບຸກຄົນຜູ້ທີ່ເປັນຄົນຫູຫນວກ, ມີການໄດ້ຍິນລໍາບາກ ຫຼືປາກກືກ ອາດຈະຕິດຕໍ່ຫາ USDA ຜ່ານບໍລິການຖ່າຍທອດລັດຖະບານກາງ (Federal Relay Service) ທີ່ (800) 877-8339. ນອກຈາກນີ້, ຂໍ້ມູນຂ່າວສານໂຄງການອາດມີຢູ່ໃຫ້ໃນພາສາອື່ນໆ

ເພື່ອຍື່ນຄໍາຮ້ອງທຸກທີ່ກ່ຽວກັບການຈໍາແນກເລືອກປະຕິບັດ, ສໍາເລັດແບບຟອມການຮ້ອງຮຽນ USDA Program Discrimination, (AD, 3027) ພົບອອນໄລນ໌ໄດ້ທີ່ເວັບ: How to File a Complaint, ແລະມີໃຫ້ຢູ່ໃນທຸກທີ່ທໍາການ USDA, ຫຼືຂຽນຈົດຫມາຍໄປເຖິງ USDA ແລະຂຽນຂໍ້ມູນ ທີ່ຕ້ອງໃສ່ໃນແບບຟອມການຮ້ອງຮຽນຮວມຢູ່ໃນຈົດຫມາຍດ້ວຍ. ເພື່ອຂໍເອົາສໍາເນົາແບບຟອມ, ໃຫ້ໂທຫາ **(866) 632-9992**. ຍື່ນສ່ງແບບຟອມທີ່ສໍາເລັດແລ້ວຂອງທ່ານຫຼືສົ່ງຈົດຫມາຍໄປທີ່ USDA ໂດຍ:

(1) ສົ່ງທາງໄປສະນີ: U.S. Department of Agriculture
Office of the Assistant Secretary for Civil Rights
1400 Independence Avenue, SW
Washington, D.C. 20250-9410;

(2) ທາງແຟັກ: (202) 690-7442; ຫຼື

(3) ທາງອີເມວ: program.intake@usda.gov

ສະຖາບັນນີ້ແມ່ນເປັນທີ່ໃຫ້ໂອກາດເທົ່າທຽມກັນ.